ການຝຶກອົບຮົມ ຫົວຂໍ້ "ການຝຶກອົບຮົມຄູຝຶກ ການຄ້າຕ່າງປະເທດ ແລະ ຄວາມອາດສາມາດ"
Written by Saysomphet
Friday, 07 September 2012 10:11 - Last Updated Tuesday, 11 September 2012 13:33

ຫົວຂໍ້: ການຝຶກອົບຮົມຄູຝຶກ ການຄ້າຕ່າງ ປະເທດ ແລະ ຄວາມອາດ ສາມາດ (ມ.ຊ ຈຳປາສັກ, ມ.ຊ
ແຫ່ງຊາດ ນະຄອນ ຫຼວງວຽງຈັນ, ວິທະຍາໄລການຄ້າ, ມ.ຊ ສຸພານຸວົງ ແລະ ສະຖາບັນຄົ້ນຄ້ວາ
ເສດຖະກິດ ແຫ່ງຊາດ) ຄັ້ງທີ່ 1 ວັນທີ 20-24 ສິງຫາ 2012, ວັງວຽງ, ແຂວງ ວຽງຈັນ.

ການຝຶກອົບຮົມໃນຄັ້ງນີ້ບໍ່ແມ່ນການຝຶກອົບຮົມແບບທົ່ວໄປ, ເພາະຈະ ເປັນແບບ
ຝຶກຫັດທີ່ຕ້ອງ ໄດ້ມີການຄົ້ນຄ້ວາດ້ວຍຕົນເອງ, ການອອກ ແບບການສອນດ້ວຍ ຕົນເອງ,
ການຈັດຫ້ອງຝຶກອົບຮົມ, ການອອກແບບລວໃໄປເຖິງການສ້າງຂໍ້ສອບ, ບົດຝຶກຫັດ ແລະ ເຕັກນິກການ
ອຳນວຍຄວາມ ສະດວກຕ່າງໆ ໃນເວລາຕັດສິນໃຈ ໃນການຈັດການຝຶກອົບຮົມ.

ຜ່ານມາແມ່ນທີມງານຄູຝຶກ ສສຄ ໄດ້ຈັດການຝຶກອົບຮົມຢູ່ທ້ອງຖິ່ນ ແລະ ສູນກາງ, ແລະ ຄັ້ງນີ້
ແມ່ນ ໄດ້ເຊື້ອເຊີນບັນດາ ທ່ານຜູ້ທີ່ ເຄີຍເຂົ້າ ຮ່ວມນັ້ນ ມາຍົກລະດັບ ເປັນ ຄູຝຶກໂດຍມາ
ແລກປ່ຽນເອົາ ເຕັກນິກຮ່ວມ ກັນ ເກັບກ່ຽວປະສົບການທີ່ຝຶກສອນ, ທາງສສຄເອງ ເຊື່ອວ່າ ທຸກໆ
ທ່ານ ທີ່ມາຮ່ວມ ນີ້ຈະມີປະສົບການ ສິດສອນ ໃນມະຫາວິທະຍາໄລ ແລະ ນີ້ກໍ່ ເປັນຂໍກຸແຈ ສຳຄັນ
ທີ່ຈະສາມາດປະກອບ ເຂົ້າກັບການຄົ້ນຄ້ວາ ເຕັກນິກການສອນ ນີ້ເພີ້ມເຕີມ.ດັ່ງທີ່ຮັບຊາບ,
ສສຄ ໄດ້ຮ່ວມກັບບໍລິສັດທີ່ປຶກສາ ເອັດສເຕ ພັດທະນາ ຫຼັກສູດນີ້ຂຶ້ນ ຈຸດປະສົງນີ້
ກໍ່ເພື່ອໃຫ້ວິຊາດັ່ງກ່າວໄດ້ຖືກພັດທະນາ ໃຫ້ພະນັກງານ, ອົງກອນທັງພາກລັດ ແລະ ເອກະຊົນ
ສາມາດນຳເອົາ ບົດຮຽນໄປນຳໃຊ້ໃນວຽກງານ ແລະ
ສາມາດເອົາໄປເຜີຍແຜ່ໃຫ້ກັບທ້ອງຖິ່ນຂອງຕົນເອງ, ສສຄ ເຫັນວ່າ ຖ້າມີ ແຕ່ທີມຄູຝຶກ ຂອງ
ສສຄ, ຫຼັກສູດດັ່ງກ່າວ ແມ່ນຈະບໍ່ໄດ້ຖືກເເຜ່ຂະຫຍາຍ ໃຫ້ໄດ້ ທົ່ວປະເທດ, ດັ່ງນັ້ນ
 1 / 2

ການຝຶກອົບຮົມ ຫົວຂໍ້ "ການຝຶກອົບຮົມຄູຝຶກ ການຄ້າຕ່າງປະເທດ ແລະ ຄວາມອາດສາມາດ"
Written by Saysomphet
Friday, 07 September 2012 10:11 - Last Updated Tuesday, 11 September 2012 13:33
ພວກເຮົາຈຶ່ງເຫັນໄດ້ເຖິງຄວາມສຳ ຄັນວ່າ ການຂະຫຍາຍຄວາມຮູ້ ໃຫ້ທົ່ວເຖິງ
ແມ່ນຕ້ອງໄດ້ມີນັກປາດຈາກຫຼາຍອົງກອນຮ່ວມມືກັນ ນັ້ນກໍ່ໝາຍຄວາມວ່າ ຕ້ອງ ມີ
ຈາກທາງມະຫາວິທະຍາໄລ ແລະ ສະຖາບັນຕ່າງໆ ມາຮ່ວມເປັນຄູຝຶກຮ່ວມກັນ
ເພື່ອຈະສ້າງໃຫ້ວຽກງານນີ້ເຂັ້ມແຂງ ແລະ ຂະຫຍາຍໄປທົ່ວເຖິງໄດ້.
ພາຍຫຼັງຈົບການຝຶກອົບຮົມແບບ ວິຊາການນີ້ແລ້ວ, ທ່ານສາມາດນຳ ເອົາຫຼັກສູດຂອງ ທາງ ສສຄ
ໄປຜັນຂະຫຍາຍ ສິດສອນໃນ ຂະ ແໜງ ການຂອງທ່ານ, ຫຼື ສາມາດ ໄປສິດສອນຮ່ວມກັບ ສສຄ ໄດ້.
ສສຄບໍ່ໄດ້ ສະຫງວນລິຂະສິດວິຊາ ດັ່ງກ່າວແຕ່ ທາງ ສສຄ ຢາກໃຫ້ວິຊາດັ່ງກ່າວ
ໄດ້ຖືກນຳໃຊ້ໃຫ້ທົ່ວທຸກແຂວງ, ເມືອງ ຫຼື ຈົນກວມຮອດບ້ານ ກໍ່ຈະເປັນ ການດີທີ່ສຸດ.
ການຝຶກອົບຮົມຄັ້ງນີ້ ຈະເປັນແບບການຄົ້ນຄ້ວາຮ່ວມກັນ, ເປັນແບບວິຊາການ, ທຸກໆ
ຢ່າງແມ່ນເນັ້ນ ເປັນການຄົ້ນຄ້ວາ, ການດັດປັບຫຼັກສູດ ໃຫ້ແທດເໝາະກັບສະພາບຕົວຈິງ,
ແທດເໝາະກັບທັດສະນະ ແລະ ບຸຂະລິກຄະພາບຂອງຄູສອນເອງ, ດັ່ງນັ້ນ ຈຶ່ງຖືວ່າ ມັນເປັນການ
ຄົ້ນຄ້ວາແບບສິດສອນ ຂອງຕົນເອງ ແລະ ເປັນກັນເອງ ເພື່ອບໍ່ໃຫ້ການ
ຝຶກອົບຮົມເຄັ່ງຂຶມເກີນ ໄປ. ການເຮັດວຽກຂອງທ່ານ ຈະເນັ້ນເປັນແບບການຕອບ - ຖາມ,
ບໍ່ແມ່ນການສິດສອນບົດຕໍ່ບົດ, ແຕ່ຈະໃຫ້ທ່ານໄດ້ອ່ານ ເອງ, ຖາມໃນສິ່ງທີ່ບໍ່ເຂົ້າ
ໃຈກັບພວກເຮົາ ແລະ ພວກເຮົາຈະເອົາເຕັກນິກແລກປ່ຽນກັບທ່ານ. ເພື່ອໃຫ້ທ່ານ
ກາຍເປັນຄູຝຶກທີ່ ຮູ້ຮອບດ້ານ.

 2 / 2